ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພິທີປະກາດການປັບປຸງການຈັດຕັ້ງ ຂອງທະນາຄານພັດທະນາລາວ ແລະ ສະຖາບັນການທະນາຄານ






ໃນຕອນບ່າຍຂອງວັນທີ 13 ສິງຫາ 2021 ທີ່ ສະຖາບັນການທະນາຄານ, ທະນາຄານພັດທະນາລາວ (ທພລ) ແລະ ສະຖາບັນການທະນາຄານ (ສທຄ) ໄດ້ຈັດຕັ້ງພິທີປະກາດການປັບປຸງການຈັດຕັ້ງຕໍາແໜ່ງຜູ້ບໍລິຫານຂັ້ນສູງຂຶ້ນ ໂດຍການໃຫ້ກຽດເຂົ້າຮ່ວມໃນພິທີຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ ແລະ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ, ປະທານສະພາບໍລິຫານທະນາຄານ ພັດທະນາລາວ ພ້ອມດ້ວຍຜູ້ຕາງໜ້າຈາກກະຊວງສຶກສາທິການ, ຜູ້ຕາງໜ້າຈາກກະຊວງການເງິນ, ພະນັກງານທີ່ກ່ຽວຂ້ອງຂອງ ທພລ ແລະ ສທຄ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີທ່ານ ປອ. ອາຄົມ ປຣະເສີດ ຜູ້ອໍານວຍການທະນາຄານ ພັດທະນາລາວ ແລະ ທ່ານ ປອ. ສັນຕິ ພົນເມືອງລາວ ຜູ້ອໍານວຍການ ສະຖາບັນການທະນາຄານ ໄດ້ຂຶ້ນລາຍງານຫຍໍ້ກ່ຽວກັບສະພາບການເຄື່ອນໄຫວວຽກງານຂອງ ທພລ ແລະ ສທຄ ປະຈໍາ 6 ເດືອນ ຕົ້ນປີ ແລະ ທິດທາງແຜນການ 6 ເດືອນ ທ້າຍປີ 2021 ພ້ອມທັງເປີດໂອກາດໃຫ້ພະນັກງານຜູ້ເຂົ້າຮ່ວມທັງສອງຝ່າຍໄດ້ປະກອບຄໍາຄິດເຫັນຕໍ່ການລາຍງານດັ່ງກ່າວ. ຫຼັງຈາກນັ້ນ, ທ່ານ ສູນທອນ ສິນທະປະເສີດ ຮອງຜູ້ອໍານວຍການ ທພລ ແລະ ທ່ານ ພານຸສັກ ແກ່ນວົງພະຈັນ ຫົວໜ້າກົມຈັດຕັ້ງແລະພະນັກງານ ທຫລ ໄດ້ຂຶ້ນອ່ານຂໍ້ຕົກລົງຂອງສະພາບໍລິຫານທະນາຄານພັດທະນາລາວ ເລກທີ 19/ສພທ.ທພລ ລົງວັນທີ 10/8/2021 ວ່າດ້ວຍການຍົກຍ້າຍຜູ້ອໍານວຍການ ທພລ ໄປປະຈໍາການຢູ່ ທຫລ ແລະ ຄໍາສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການຍົກຍ້າຍພະນັກງານໄປຮັບໜ້າທີ່ໃໝ່ ສະບັບເລກທີ 17/ນຍ ລົງວັນທີ 21/6/2021 ຍົກຍ້າຍທ່ານ ປອ. ສັນຕິ ພົນເມືອງລາວ ຜູ້ອໍານວຍການ ສທຄ ໄປຮັບໜ້າທີ່ໃໝ່ຢູ່ຫ້ອງການ ທຫລ, ດໍາລັດວ່າດ້ວຍການແຕ່ງຕັ້ງຫົວໜ້າສະຖາບັນການທະນາຄານ, ທຫລ ສະບັບເລກທີ 454/ນຍ ລົງວັນທີ 21/6/2021 ແຕ່ງຕັ້ງທ່ານ ປອ. ອາຄົມ ປຣະເສີດ ຜູ້ອໍານວຍການ ທພລ ເປັນຜູ້ອໍານວຍການ ສະຖາບັນການທະນາຄານ ຕາມລໍາດັບ.



ການປັບປຸງການຈັດຕັ້ງໃນຄັ້ງນີ້ເປັນການຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິຂອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ IV ໃນການປະຕິບັດຍຸດທະສາດ ແຜນງານ-ໂຄງການເຂົ້າໃນການພັດທະນາເສດຖະກິດ, ການເງິນ-ເງິນຕາ ເຂົ້າສູ່ການປະຕິບັດຕົວຈິງ, ພ້ອມທັງເປັນການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ເທື່ອທີ 9 ໃຫ້ບັນລຸຄາດໝາຍທີ່ວາງໄວ້. ໃນໂອກາດດຽວກັນນີ້, ທ່ານຜູ້ວ່າການ ທຫລ ໄດ້ຕີລາຄາສູງຕໍ່ຜົນງານທີ່ຜູ້ບໍລິຫານຂັ້ນສູງທັງສອງທ່ານໄດ້ສ້າງໄວ້ຢ່າງຫຼວງຫຼາຍໃນເວລາຮັບໜ້າທີ່ໃນໄລຍະຜ່ານມາ, ທັງສອງທ່ານແມ່ນເປັນພະນັກງານນໍາພາຫຼັກແຫຼ່ງຂອງຂະແໜງການທະນາຄານທີ່ໄດ້ຜ່ານຂະບວນການປະຕິບັດໜ້າທີ່ຕົວຈິງຢູ່ຫຼາຍກົມກອງທີ່ສໍາຄັນ ພ້ອມທັງໄດ້ສຸມທຸກເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນການປະຕິບັດໜ້າທີ່ວຽກງານຊີ້ນໍາ-ນໍາພາພາກສ່ວນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຈົນໄດ້ຮັບຜົນສໍາເລັດເປັນຢ່າງດີ.

**# ຂ່າວ-ພາບ: ນ. ວັນປະເສີດ ສີມບູນຂັນ.**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນໍາໃຊ້ເງິນກີບ